ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 108 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 15.6.2017

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສິລະປະການສະແດງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 04 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍສິລະປະການສະແດງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 02 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍສິລະປະການສະແດງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 04/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສິລະປະການສະແດງ

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສິລະປະການສະແດງ ໃນວາລະກອງປະຊຸມ ວັນທີ 04 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສິລະປະການສະແດງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 16 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 04 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍສິລະປະການສະແດງ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງ, ການເຄື່ອນໄຫວວຽກງານສິລະປະການສະແດງ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ ແລະ ເຂັ້ມແຂງ ແນໃສ່ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ ເຂົ້າໃນການຟື້ນຟູ, ອະນຸລັກ, ພັດທະນາ, ເຜີຍແຜ່, ຊົມໃຊ້ສິລະປະວັດທະນະທຳທີ່ມີລັກສະນະຊາດ, ກ້າວໜ້າ, ມະຫາຊົນ; ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານສິລະປະວັດທະນະທຳໃນສັງຄົມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ສິລະປະການສະແດງ**

ສິລະປະການສະແດງ ແມ່ນ ການເຄື່ອນໄຫວ ໂຄສະນາ ເຜີຍແຜ່ ມູນເຊື້ອສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ນຳເອົາຜະລິດຕະພັນດ້ານສິລະປະການສະແດງ, ຜົນງານໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ອອກສູ່ສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິລະປະ** ໝາຍເຖິງ ຄຸນຄ່າລວມຍອດແຫ່ງຄວາມງາມ, ຄວາມດີ, ທາງອາລົມຈິດ, ຄວາມຮູ້ສຶກ, ອຸດົມການ, ແນວຄິດຈິນຕະນາການ, ການເຄື່ອນໄຫວຂອງຄົນ, ຄຸນສົມບັດ, ສິນທຳ, ແບບແຜນການດຳລົງຊີວິດ;
2. **ສິລະປະວັດທະນະທຳ** ໝາຍເຖິງ ບັນດາປະເພດສິລະປະການສະແດງ ທີ່ເປັນເອກະລັກທາງດ້ານວັດທະນະທຳອັນດີງາມຂອງຊາດ;
3. **ອຸປະກອນປະກອບການສະແດງ** ໝາຍເຖິງ ເຄື່ອງນຸ່ງຖື, ເຄື່ອງເອ້ຍ້ອງປະດັບປະດາ, ເຕັກນິກ, ແສງ, ສີ, ສຽງ ແລະ ອື່ນໆ;

4. **ຜະລິດຕະພັນສິລະປະການສະແດງ** ໝາຍເຖິງ ໝາກຜົນຂອງການຄົ້ນຄິດປະດິດແຕ່ງ, ຜົນງານການສະແດງທີ່ສ້າງສັນ ທີ່ໄດ້ສະແດງ ແລະ ບັນທຶກເຂົ້າໃນລະບົບອຸປະກອນເອເລັກໂຕຣນິກ;

5. **ຜູ້ຜະລິດສິລະປະການສະແດງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜະລິດ, ກຳກັບ, ສະແດງ ສ້າງສັນຜົນງານສິລະປະການສະແດງ ເຊັ່ນ ນັກປະດິດແຕ່ງ, ນັກກຳກັບ, ນັກສະແດງ, ຜູ້ລົງທຶນ;

6. **ການບັນທຶກສຽງ ແລະ ພາບ** ໝາຍເຖິງ ການບັນທຶກຜົນງານ, ບົດປະພັນ ແລະ ການສະແດງ ຂອງສິລະປະຂະແໜງຕ່າງໆ ເຂົ້າໃນອຸປະກອນເອເລັກໂຕຣນິກ;

7. **ເດຊີເບວ (Decibel)** ໝາຍເຖິງ ຫົວໜ່ວຍວັດແທກຄວາມດັງຂອງສຽງ;

8. **ຜູ້ຈຳໜ່າຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນສິລະປະການສະແດງ;

9. **ຜູ້ນຳໃຊ້ສິລະປະການສະແດງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເອົາ ບົດປະພັນ, ຜະລິດຕະພັນສິລະປະການສະແດງ ໄປເຄື່ອນໄຫວສະແດງ, ປະກອບກິດຈະການ ຫຼື ໂຄສະນາເຜີຍແຜ່ດ້ານວັດທະນະທຳ ແລະ ສິລະປະການສະແດງ;

10. **ສິລະປະທີ່ເປັນພິດໄພ** ໝາຍເຖິງ ສິລະປະ ທີ່ມີເນື້ອໃນໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຕໍ່ແນວທາງ ນະໂຍບາຍ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ;

11. **ສິລະປະລາມົກອະນາຈານ** ໝາຍເຖິງ ບົດປະພັນ, ການສະແດງ ແລະ ຜະລິດຕະພັນ ທີ່ມີລັກສະນະສົ່ງເສີມ ການໃຊ້ວາຈາບໍ່ສຸພາບ ຫຍາບຄາຍ, ໂປ້ເປືອຍ, ອວດໂສມ ທີ່ເປັນການກະຕຸ້ນອາລົມທາງເພດ;

12. **ສິລະປະຊອດກະຈາ** ໝາຍເຖິງ ບົດປະພັນ, ການສະແດງສິລະປະ ປະເພດຕ່າງໆ ທີ່ມີລັກສະນະສັບສົນປົນເປ, ຕາບຈູມ ຊຶ່ງບໍ່ຮູ້ທີ່ມາຂອງສິລະປະນັ້ນ;

13. **ເຈົ້າໜ້າທີ່ສິລະປະການສະແດງ** ໝາຍເຖິງ ພະນັກງານ-ລັດຖະກອນ ທີ່ເຮັດວຽກຄຸ້ມຄອງສິລະປະການສະແດງທຸກຂັ້ນ ທັງສູນກາງ ແລະ ທ້ອງຖິ່ນ;

14. **ສໍ້ໂກງເອົາລິຂະສິດ** ໝາຍເຖິງ ການນຳໃຊ້ເລ່ຫຼ່ຽມ ຕົວະຍົວະຫຼອກລວງ ເພື່ອເຮັດໃຫ້ຜູ້ອື່ນມອບສິດທາງດ້ານຜົນງານ ການປະດິດແຕ່ງ, ສິລະປະກຳ, ວັນນະກຳ ແລະ ຜົນງານທາງດ້ານວິທະຍາສາດ ໃຫ້ຕົນ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສິລະປະການສະແດງ

ລັດ ສົ່ງເສີມ ແລະ ພັດທະນາວຽກງານສິລະປະການສະແດງຂອງລັດ ໃຫ້ມີການຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການຟື້ນຟູ, ອະນຸລັກ, ພັດທະນາ, ເຜີຍແຜ່, ຊົມໃຊ້ສິລະປະການສະແດງ ທັງຮັບເອົາສິລະປະອັນຍອດຍິ່ງ ຂອງມວນມະນຸດ ຢ່າງມີການເລືອກເຟັ້ນ, ເຮັດໃຫ້ຜະລິດຕະພັນສິລະປະການສະແດງ ມີຄວາມອຸດົມສົມບູນ ແລະ ຍືນຍົງ; ເສີມສ້າງສິລະປະວັດທະນະທຳ ໃຫ້ມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານຈິດໃຈ ຂອງສັງຄົມ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເສີມຂະຫຍາຍພອນສະຫວັນໃນການປະດິດແຕ່ງ, ສະແດງ ແລະ ສ້າງສັນຜະລິດຕະພັນສິລະປະການສະແດງ; ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວິຊາສະເພາະ, ວັດທະນະທຳ, ຄຸນສົມບັດ, ສິນທຳ ແລະ ຈັນຍາບັນ ຂອງຜູ້ເຄື່ອນໄຫວວຽກງານສິລະປະການສະແດງ.

ມາດຕາ 5 ຫຼັກການກ່ຽວກັບວຽກງານສິລະປະການສະແດງ

ການເຄື່ອນໄຫວວຽກງານສິລະປະການສະແດງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ, ມູນເຊື້ອວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

2. ສົ່ງເສີມ ຄວາມອຸດົມຮັ່ງມີ, ສວຍສົດງົດງາມ ຂອງປະເທດຊາດ, ມູນເຊື້ອວິລະກຳອັນພິລະອາດຫານ, ຄວາມດຸໝັ່ນຂະຫຍັນພຽນ, ປະດິດສ້າງ ຂອງບັນພະບູລຸດ ແລະ ປະຊາຊົນລາວບັນດາເຜົ່າ ໃນແຕ່ລະຍຸກສະໄໝ;

3. ສຶກສາອົບຮົມ ນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ໃຫ້ທົ່ວປວງຊົນມີຄວາມຕື່ນຕົວເຂົ້າຮ່ວມ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ;

4. ສ້າງຄວາມສາມັກຄີໃນ ຄອບຄົວ, ສັງຄົມ ແລະ ຄວາມປອງດອງພາຍໃນຊາດ, ສົ່ງເສີມ ແລະ ອະນຸລັກວັດທະນະທຳ, ສິລະປະວັນນະຄະດີອັນດີງາມຂອງຊາດ ແລະ ຂອງເຜົ່າ, ຕຳນິວິຈານສິ່ງຫຍໍ້ທໍ້ໃນສັງຄົມ, ປະກອບສ່ວນເຂົ້າໃນການແກ້ໄຂສິ່ງກີດຂວາງຖ່ວງດຶງຄວາມກ້າວໜ້າ ຂອງປະເທດຊາດ;

5. ສ້າງສັນບັນເທີງ ດ້ວຍຫຼາຍຮູບຫຼາຍສີ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານຈິດໃຈ, ເປັນສື່ສຳພັນ ຂອງສັງຄົມ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໂດຍມີການເລືອກເຟັ້ນ.

ມາດຕາ 6 ສິດ ແລະ ພັນທະຂອງພົນລະເມືອງ ຕໍ່ສິລະປະການສະແດງ

ພົນລະເມືອງທຸກຄົນ ມີສິດໄດ້ຮັບຂໍ້ມູນ ຂ່າວສານ, ສາລະຄວາມຮູ້, ສາລະບັນເທີງ ແລະ ຊົມໃຊ້ຜະລິດຕະພັນສິລະປະການສະແດງ, ມູນເຊື້ອສິລະປະວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ ແລະ ມີພັນທະໃນການຟື້ນຟູ, ອະນຸລັກ, ພັດທະນາ, ປົກປັກຮັກສາ, ສົ່ງເສີມ, ເຜີຍແຜ່ ແລະ ສືບທອດວຽກງານສິລະປະການສະແດງ ຂອງຊາດ, ຂອງເຜົ່າ; ປະກອບສ່ວນຕ້ານ, ສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ໃນການເຄື່ອນໄຫວທາງດ້ານສິລະປະວັດທະນະທຳໃນສັງຄົມ.

ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານສິລະປະການສະແດງ ຢູ່ ດິນແດນ ຂອງ ສປປ ລາວ.

ມາດຕາ 8 ການຮ່ວມມືກັບສາກົນ

ລັດສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນ ສິລະປະວັດທະນະທຳ, ສິລະປະການສະແດງ, ພັດທະນາບຸກຄະລາກອນ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ເພື່ອເຮັດໃຫ້ວຽກງານສິລະປະການສະແດງ ມີຄຸນນະພາບ ແລະ ທັນສະໄໝ ບົນພື້ນຖານການເຄົາລົບກົດໝາຍ ແລະ ຮີດຄອງປະເພນີອັນດີງາມ ຂອງກັນ ແລະ ກັນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ສິລະປະການສະແດງ

### ໝວດທີ 1
### ປະເພດສິລະປະການສະແດງ

**ມາດຕາ 9 ປະເພດສິລະປະການສະແດງ**

ສິລະປະການສະແດງ ຕົ້ນຕໍ ມີ ດັ່ງນີ້:

1. ການຂັບ, ລຳທ້ອງຖິ່ນ, ຊົນເຜົ່າ ແລະ ເພງຮ້ອງ;
2. ດົນຕີ ພື້ນເມືອງ, ຊົນເຜົ່າ ແລະ ສາກົນ;
3. ການຟ້ອນ ພື້ນເມືອງ, ຊົນເຜົ່າ, ລາວສະໄໝ ແລະ ສາກົນ;
4. ກາຍຍະສິນ ແລະ ວິທະຍາກົນ;
5. ລະຄອນ;
6. ການສະແດງເດີນແບບ;
7. ປະເພນີມ່ວນຊື່ນ ຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 10 ການຂັບ, ລຳທ້ອງຖິ່ນ, ຊົນເຜົ່າ ແລະ ເພງຮ້ອງ**

ການຂັບ ແມ່ນ ສິລະປະດ້ານສຽງ ໂດຍມີເນື້ອຮ້ອງ, ທຳນອງ, ຈັງຫວະທີ່ເປັນເອກະລັກ ຂອງທ້ອງຖິ່ນ ແລະ ຊົນເຜົ່າ ທາງພາກເໜືອ ຫາ ພາກກາງຂອງລາວ ເຊັ່ນ ຂັບທຸ້ມຫຼວງພະບາງ, ຂັບອ່ານໜັງສື, ຂັບສະຫຼາງ, ຂັບສາມສ້າວສອງຄອນລອດໄຄ້, ຂັບນາກສະດຸ້ງ, ຂັບງື່ມ, ຂັບຊຽງຂວາງ, ຂັບຊຳເໜືອ, ຂັບລື້, ຂັບໄຕດຳ, ຂັບໄຕແດງ, ຂັບໄຕຂາວ, ເສື່ອງ, ຂັບກະເລີ່ງ, ຂັບມົ້ງ, ຂັບເຈິມອາຍ, ຂັບເດີມ, ຂັບຈ້ອຍຍວນ, ຂັບລ່ອງຣຸ່ງ, ຂັບກັບເກົ່າ, ຂັບທົ່ງ, ຂັບສະເລາະ, ຂັບຢ້າວ ຫຼື ອື່ວມ່ຽນ, ຂັບງ້ອມ, ຂັບດອກດິນ, ຂັບມ້າຢ້ອງ, ຂັບຄາງ, ຂັບຜູ້ນ້ອຍ, ຂັບໄຕວາດ, ຂັບເມີ້ຍ, ຂັບຍໍ້, ຂັບໂອ້, ຂັບຕຸມ ແລະ ອື່ນໆ.

ການລຳ ແມ່ນ ສິລະປະດ້ານສຽງ ໂດຍມີເນື້ອຮ້ອງ, ທຳນອງ, ຈັງຫວະທີ່ເປັນເອກະລັກ ຂອງທ້ອງຖິ່ນ ແລະ ຊົນເຜົ່າ ທາງພາກກາງ ຫາ ພາກໃຕ້ຂອງລາວ ເຊັ່ນ ລຳຄູ່, ລຳກອນຜະຫຍາທ້ອງຖິ່ນ, ລຳລ່ອງ, ລຳເລື່ອງ, ລຳເຕີ້ຍ, ລຳຊິ້ງ, ລຳເພີນ, ລຳເດີນ, ລຳເຕີ້ຍຫົວໂນນຕານ, ລຳມະຫາໄຊ, ລຳຄອນສະຫວັນ, ລຳຕັ່ງຫວາຍ, ລຳຜູ້ໄທ, ລຳບ້ານຊອກ, ລຳສາລະວັນ, ລຳສີພັນດອນ, ລຳໂສມ, ລຳອັດຕະປື, ລຳຕະໂອ້ຍ, ລຳກະເລີ້ຍ, ລຳຕະເລມອນ, ລຳບ້ານທົ່ງ, ລຳບັງລອງ, ລຳເຈີ, ລຳເຢາະສະກາ, ລຳລະໜອດ, ລຳໂປຣມ, ລຳຕະເອີຍລະເອີຍ, ລຳຕະມ້ອນ, ລຳປະລາໜ້ອຍຕອງ, ລຳກະເລີ່ຍ, ລຳຈະເປັນຣ໌, ລຳປີຣລ໌, ລຳຢະ, ລຳເຈືອງ, ລຳກະຢ່ອງ ແລະ ອື່ນໆ.

ເພງຮ້ອງ ແມ່ນ ສິລະປະດ້ານສຽງ ໂດຍມີເນື້ອຮ້ອງ, ທຳນອງ, ຈັງຫວະ ທີ່ມີລັກສະນະຊາດ ແລະ ສາກົນ ເຊັ່ນ ເພງລາວເດີມ, ເພງປະຕິວັດ, ເພງລາວສະໄໝ ແລະ ເພງສາກົນ.

**ມາດຕາ 11 ດົນຕີພື້ນເມືອງ, ຊົນເຜົ່າ ແລະ ດົນຕີສາກົນ**

ດົນຕີພື້ນເມືອງ ແມ່ນ ສິລະປະດ້ານສຽງ ຊຶ່ງໄດ້ມາຈາກເຄື່ອງດົນຕີ ປະເພດຕ່າງໆ ປະກອບດ້ວຍເຄື່ອງດີດ, ສີ, ຕີ, ເປົ່າ ປະຈຳຊາດມີມາຄູ່ຊາດລາວແຕ່ບູຮານນະການ ເຊັ່ນ:

- ປະເພດເຄື່ອງດີດ: ກະຈັບປີ່, ພິນ ແລະ ອື່ນໆ;

- ປະເພດເຄື່ອງສີ: ຊໍອີ້, ຊໍອູ້, ຊໍບັ້ງໄມ້ເຮັຍ, ຊໍນໍ້າເຕົ້າ ແລະ ອື່ນໆ;

- ປະເພດເຄື່ອງຕີ: ລະນາດເອກ, ລະນາດທຸ້ມ, ຄ້ອງວົງເອກ, ຄ້ອງວົງທຸ້ມ, ຂິມ, ຄ້ອງບ້າງພາງຫາດ, ກອງຫຼວງ, ກອງທັດ, ກອງຫາງ, ກອງຕະໂພນ, ກອງປິ່ງ, ກອງຕຶ້ງ, ກອງແຕ໋, ກອງບັ້ງໄມ້ໄຜ່, ໂປງ, ກະລໍ, ໄມ້ກັບ, ໄມ້ງັບແງັບ, ສາບ, ຊິ່ງ, ແຊ່ງ, ເກົ່ງ ແລະ ອື່ນໆ;

- ປະເພດເປົ່າ: ແຄນ, ຂຸ່ຍ, ໂຫວດ, ສະໄນ, ຕ່ອດ, ໃບໄມ້ ແລະ ອື່ນໆ;

ດົນຕີສາກົນ ແມ່ນ ເຄື່ອງດົນຕີ ຂອງບັນດາປະຊາຊາດ ທີ່ນິຍົມຊົມໃຊ້ ໃນທົ່ວໂລກ.

**ມາດຕາ 12 ການຟ້ອນ ພື້ນເມືອງ, ຊົນເຜົ່າ, ລາວສະໄໝ ແລະ ສາກົນ**

ການຟ້ອນພື້ນເມືອງ, ຊົນເຜົ່າ, ລາວສະໄໝ ແລະ ສາກົນ ແມ່ນ ສິລະປະການເຄື່ອນເໜັງ ຂອງຮ່າງກາຍທີ່ປະກອບເປັນຈັງຫວະ, ລີລາທ່າທາງ ເພື່ອສະແດງອາລົມຈິດ ຕາມຈຸດປະສົງ ແລະ ຈິນຕະນາການ ຂອງຜູ້ປະດິດແຕ່ງ ຊຶ່ງມີຮູບແບບ ດັ່ງນີ້:

- ຟ້ອນພື້ນເມືອງລາວເດີມ ເປັນຕົ້ນ ຟ້ອນພະລັກພະລາມ, ຟ້ອນນາງແກ້ວ, ຟ້ອນກິນນະລີລິງສິງ, ຟ້ອນລາວແພນ, ຟ້ອນລໍາວົງ, ຟ້ອນຈໍາປາເມືອງລາວ ແລະ ອື່ນໆ;

- ຟ້ອນຊົນເຜົ່າ ເປັນຕົ້ນ ຟ້ອນຊົມຜົນເກັບກ່ຽວ, ເຜົ່າມົ້ງມ່ວນຊື່ນກິນຈຽງ, ບຸນຄູນເຂົ້າ, ເຕັ້ນແຊ, ຫາປາ, ເຊີ້ງບັ້ງໄຟ, ເຊີ້ງຊ່ວງເຮືອ, ບຸນຫົດນໍ້າ, ຕີກອງຜູ້ນ້ອຍ ແລະ ອື່ນໆ;

- ຟ້ອນລາວສະໄໝ ເປັນຕົ້ນ ຟ້ອນລໍາວົງທ່າເຊີນຊວນ, ຈັງຫວະສາລະວັນ, ພູໄທ, ຕັ່ງຫວາຍ, ສີພັນດອນ, ຄອນສະຫວັນ, ຂັບທຸ້ມຫຼວງພະບາງ, ສະຫຼັບຟັນປາ, ຈັງຫວະສະລິບລາວ, ລົມໂບລ້ອກລາວ, ດິສໂກລາວ ແລະ ອື່ນໆ;

- ການຟ້ອນສາກົນ ທີ່ນິຍົມຂອງບັນດາປະຊາຊາດ ເປັນຕົ້ນ ຈັງຫວະວານສ໌, ສະໂລ, ສະລຸບປີ, ສະໂລຣັອກ, ແທັງໂກ, ຣຸມບາ, ຊ່າຊ່າຊ່າ, ຣັອກ, ດິສໂກ ແລະ ອື່ນໆ.

**ມາດຕາ 13 ກາຍຍະສິນ ແລະ ວິທະຍາກົນ**

ກາຍຍະສິນ ແມ່ນ ສິລະປະການສະແດງ ທີ່ໃຊ້ພະລັງກາຍ, ອາລົມຈິດ ຂອງຄົນ ຫຼື ຄົນກັບສັດ ທີ່ມີອຸປະກອນ ປະກອບເປັນລາຍການສະແດງ.

ວິທະຍາກົນ ແມ່ນ ສິລະປະການສະແດງ ທີ່ນໍາໃຊ້ຮ່າງກາຍຂອງຄົນ, ວັດຖຸປະກອນ, ເຕັກນິກວິທະຍາສາດ ທີ່ມີການສະແດງອອກຢ່າງຊໍານານ ແລະ ຄ່ອງແຄ້ວວ່ອງໄວ.

**ມາດຕາ 14 ລະຄອນ**

ລະຄອນ ແມ່ນ ສິລະປະການສະແດງ ທີ່ນໍາໃຊ້ຮ່າງກາຍ, ພາສາເວົ້າ, ອຸປະກອນ ຕາມອາລົມຈິດ ແລະ ອະລິຍະບົດຕ່າງໆ.

ລະຄອນ ປະກອບດ້ວຍຫຼາຍປະເພດ ເປັນຕົ້ນ ລະຄອນເວົ້າ, ລະຄອນລໍາ, ລະຄອນຕຸກກະຕາ, ລະຄອນຟ້ອນ, ລະຄອນເພງ, ລະຄອນຕະຫຼົກ, ລະຄອນກົກ, ໂຕ້ວາທີ, ເລົ່າເລື່ອງຊວນຫົວ, ລະຄອນວິທະຍຸ, ລະຄອນໂທລະພາບ.

**ມາດຕາ 15 ການສະແດງເດີນແບບ**

ການສະແດງເດີນແບບ ແມ່ນ ການນໍາສະເໜີແບບເຄື່ອງນຸ່ງ, ເຄື່ອງເອ້ຢ້ອງ ແລະ ການແຕ່ງກາຍ ແບບດັ້ງເດີມ ຫຼື ແບບປະຍຸກ ຂອງປະຊາຊົນລາວບັນດາເຜົ່າ ແລະ ຍຸກສະໄໝ.

**ມາດຕາ 16 ປະເພນີມ່ວນຊື່ນ**

ປະເພນີມ່ວນຊື່ນ ແມ່ນ ງານບຸນ, ເທດສະການ, ມະຫາກຳ ຕາມຄວາມເຊື່ອຖືຂອງປະຊາຊົນລາວບັນດາເຜົ່າ.

## ໝວດທີ 2
## ລັກສະນະຂອງສິລະປະການສະແດງ

**ມາດຕາ 17 ລັກສະນະຂອງສິລະປະການສະແດງ**

ສິລະປະການສະແດງ ມີລັກສະນະ ດັ່ງນີ້:

1. ລັກສະນະຊາດ;
2. ລັກສະນະກ້າວໜ້າ;
3. ລັກສະນະມະຫາຊົນ.

**ມາດຕາ 18 ລັກສະນະຊາດ**

ສິລະປະການສະແດງ ທີ່ມີລັກສະນະຊາດ ຕ້ອງສ່ອງແສງເຖິງ ຂະນົບທຳນຽມ, ຮີດຄອງປະເພນີ ແລະ ມູນເຊື້ອສິລະປະວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ຂອງເຜົ່າ.

**ມາດຕາ 19 ລັກສະນະກ້າວໜ້າ**

ສິລະປະການສະແດງ ທີ່ມີລັກສະນະກ້າວໜ້າ ຕ້ອງສ່ອງແສງເຖິງການເສີມຂະຫຍາຍຄຸນຄ່າ ຂອງວັດທະນະທຳແຫ່ງຊາດ ສົມທົບກັບການຮັບເອົາຄຸນຄ່າ ວັດທະນະທຳອັນດີງາມຂອງມວນມະນຸດ ຢ່າງມີການເລືອກເຟັ້ນ, ສອດຄ່ອງກັບແນວທາງ ນະໂຍບາຍ, ກົດໝາຍ, ຕຳນິຕິຈານປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ແລະ ຕອບຕ້ານຖ້ອຍທຳນອງທີ່ບິດເບືອນ, ໃສ່ຮ້າຍປ້າຍສີ ທີ່ສ້າງຄວາມເສື່ອມເສຍຕໍ່ຜົນປະໂຫຍດ ຂອງຊາດ ແລະ ປະຊາຊົນ.

**ມາດຕາ 20 ລັກສະນະມະຫາຊົນ**

ສິລະປະການສະແດງ ທີ່ມີລັກສະນະມະຫາຊົນ ຕ້ອງສ່ອງແສງເຖິງການເສີມຂະຫຍາຍຄຸນຄ່າຂອງວັດທະນະທຳແຫ່ງຊາດ ຊຶ່ງມະຫາຊົນເປັນຜູ້ສ້າງສັນ, ຊົມໃຊ້, ມີສ່ວນຮ່ວມໃນການປົກປັກຮັກສາ ແລະ ເສີມຂະຫຍາຍ, ມີບົດບາດສຳຄັນໃນການສ້າງຄວາມຮັກແພງ, ສາມັກຄີປອງດອງ, ການປົກປັກຮັກສາທຳມະຊາດ, ສ້າງຄວາມຮັກ, ຄວາມຫວັງ, ຄວາມເບີກບານມ່ວນຊື່ນ, ຄວາມເຊື່ອໝັ້ນຕໍ່ອະນາຄົດ ຂອງຕົນ ແລະ ຂອງປະເທດຊາດ.

## ພາກທີ III
## ສິລະປິນ ແລະ ນາມມະຍົດສິລະປິນ

## ໝວດທີ 1
## ສິລະປິນ

**ມາດຕາ 21 ສິລະປິນ**

ສິລະປິນ ແມ່ນ ນັກປະດິດແຕ່ງ, ນັກອອກແບບ, ນັກສະແດງ, ນັກກຳກັບ ທີ່ເຄື່ອນໄຫວວຽກງານສິລະປະການສະແດງ.

**ມາດຕາ 22 ການຂຶ້ນທະບຽນສິລະປິນ**

ສິລະປິນທຸກຄົນ ແລະ ສິລະປະການສະແດງທຸກປະເພດ ຕ້ອງໄດ້ຂຶ້ນທະບຽນ ນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 23 ປະເພດສິລະປິນ**

ສິລະປິນ ທີ່ເຄື່ອນໄຫວວຽກງານສິລະປະການສະແດງ ແບ່ງອອກເປັນ ສາມ ປະເພດ ຄື

1. ສິລະປິນອາຊີບ;
2. ສິລະປິນເຄິ່ງອາຊີບ;
3. ສິລະປິນສະໝັກຫຼິ້ນ.

**ມາດຕາ 24 ສິລະປິນອາຊີບ**

ສິລະປິນອາຊີບ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສິລະປະການສະແດງປະເພດຕ່າງໆ ເປັນອາຊີບຕົ້ນຕໍ ເຊັ່ນ ກອງສະແດງ ທີ່ການຈັດຕັ້ງຂອງລັດ ຫຼື ເອກະຊົນຄຸ້ມຄອງທາງດ້ານວິຊາການ, ບຸກຄະລາກອນ, ງົບປະມານ ແລະ ການປະກອບວັດຖຸເຕັກນິກ ຢ່າງເປັນລະບົບຄົບຊຸດ.

**ມາດຕາ 25 ສິລະປິນເຄິ່ງອາຊີບ**

ສິລະປິນເຄິ່ງອາຊີບ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ປະກອບກິດຈະການດ້ານສິລະປະການສະແດງເປັນອາຊີບສຳຮອງ ຄຽງຄູ່ກັບການປະກອບອາຊີບອື່ນ.

**ມາດຕາ 26 ສິລະປິນສະໝັກຫຼິ້ນ**

ສິລະປິນສະໝັກຫຼິ້ນ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສິລະປະການສະແດງ ເປັນບາງຄັ້ງຄາວ, ບາງໄລຍະຕາມກາລະໂອກາດ ແລະ ເງື່ອນໄຂ.

**ມາດຕາ 27 ສິດຂອງສິລະປິນ**

ສິລະປິນ ມີ ສິດ ດັ່ງນີ້:

1. ຄົ້ນຄວ້າ, ສຶກສາຮໍ່າຮຽນ ເພື່ອຍົກລະດັບທິດສະດີທາງດ້ານການເມືອງ, ວິຊາສະເພາະ ແລະ ວັດທະນະທຳ;
2. ຄົ້ນຄວ້າ, ປະດິດຄິດແຕ່ງ ແລະ ສະແດງຜົນງານຂອງຕົນ ທີ່ໄດ້ຮັບອະນຸຍາດ;
3. ສະເໜີຂໍການຢັ້ງຢືນຜົນງານສິລະປະການສະແດງຂອງຕົນ ແລະ ໄດ້ຮັບການປົກປ້ອງລິຂະສິດ ຕາມກົດໝາຍ;
4. ເຄື່ອນໄຫວ ຫຼື ດຳເນີນທຸລະກິດສິລະປະການສະແດງ ທີ່ຖືກຕ້ອງຕາມກົດໝາຍ;
5. ສ້າງຕັ້ງ ຫຼື ເຂົ້າຮ່ວມ ສະມາຄົມວິຊາຊີບ, ສູນ, ສະໂມສອນ, ມູນນິທິກ່ຽວກັບສິລະປະການສະແດງເພື່ອສັງຄົມທີ່ຖືກຕ້ອງຕາມກົດໝາຍ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 ພັນທະຂອງສິລະປິນ**

ສິລະປິນ ມີ ພັນທະ ດັ່ງນີ້:

1. ຟື້ນຟູ, ອະນຸລັກ, ພັດທະນາ ແລະ ເສີມຂະຫຍາຍມູນເຊື້ອ ສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ;

2. ໂຄສະນາເຜີຍແຜ່ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ໂດຍຜ່ານການເຄື່ອນໄຫວສິລະປະການສະແດງ;

3. ຖ່າຍທອດຄວາມຮູ້, ຄວາມສາມາດ, ບົດຮຽນ, ປະສົບການຕ່າງໆ ເພື່ອບຳລຸງສ້າງສິລະປິນຮຸ່ນສືບທອດ;

4. ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານວັດທະນະທຳໃນສັງຄົມ;

5. ມອບສຳເນົາການປະດິດແຕ່ງ ແລະ ຜະລິດຕະພັນສິລະປະການສະແດງຂອງຕົນ ໃຫ້ແກ່ອົງການທີ່ກ່ຽວຂ້ອງ ເພື່ອເປັນມໍຣະດົກໃນການຄົ້ນຄວ້າ, ສຶກສາຮໍ່າຮຽນ;

6. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ນາມມະຍົດສິລະປິນ

### ມາດຕາ 29 ນາມມະຍົດສິລະປິນ

ນາມມະຍົດສິລະປິນ ແມ່ນ ການຍົ້ງຍືນຜົນງານທີ່ໂດດເດັ່ນ ແລະ ຄຸນງາມຄວາມດີຂອງສິລະປິນ ທີ່ມີຕໍ່ປະເທດຊາດ ຊຶ່ງເປັນທີ່ຍອມຮັບຂອງສັງຄົມ.

ນາມມະຍົດສິລະປິນ ມີ ສອງ ປະເພດ ດັ່ງນີ້:

1. ສິລະປິນແຫ່ງຊາດ;
2. ສິລະປິນດີເດັ່ນ.

### ມາດຕາ 30 ສິລະປິນແຫ່ງຊາດ

ສິລະປິນແຫ່ງຊາດ ແມ່ນ ຜູ້ໄດ້ຮັບນາມມະຍົດຂັ້ນສູງສຸດ ໂດຍການຮັບຮອງຂອງປະທານປະເທດ ແຫ່ງ ສປປ ລາວ.

ສິລະປິນແຫ່ງຊາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ມີຄຸນສົມບັດ, ສິນທຳ, ມີຄວາມຮູ້, ຄວາມສາມາດ ແລະ ຈົງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ;

2. ມີຜົນງານອັນໂດດເດັ່ນໃດໜຶ່ງ ໃນການອະນຸລັກຮັກສາ, ເສີມຂະຫຍາຍ ແລະ ປະດິດຄິດສ້າງສິລະປະວັດທະນະທຳ, ມີບົດປະພັນ, ຜະລິດຕະພັນ ແລະ ການສະແດງ ເປັນທີ່ຍອມຮັບຂອງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;

3. ເປັນຜູ້ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການ ສິລະປະວັດທະນະທຳໃນແຕ່ລະໄລຍະ, ສ້າງຮຸ່ນຄົນສືບທອດ, ຖ່າຍທອດບົດຮຽນ, ປະສົບການ ໃຫ້ເພື່ອນຮ່ວມງານຢ່າງຈິງໃຈ;

4. ເປັນຜູ້ໄດ້ປະກອບສ່ວນເຂົ້າໃນຂະບວນການວຽກງານສິລະປະວັດທະນະທຳ ແລະ ປະກອບວິຊາຊີບຂອງຕົນ ເປັນໄລຍະເວລາບໍ່ຕໍ່າກວ່າ ສິບຫ້າ ປີ ແລະ ຕ້ອງໄດ້ຮັບນາມມະຍົດສິລະປິນດີເດັ່ນມາກ່ອນ.

### ມາດຕາ 31 ສິລະປິນດີເດັ່ນ

ສິລະປິນດີເດັ່ນ ແມ່ນ ຜູ້ໄດ້ຮັບນາມມະຍົດ ໂດຍການຮັບຮອງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ສິລະປິນດີເດັ່ນ ຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂໍ້ 1, 2 ແລະ 3 ຂອງກົດໝາຍສະບັບນີ້ ແລະ ໄດ້ປະກອບສ່ວນເຂົ້າໃນຂະບວນການວຽກງານສິລະປະວັດທະນະທຳ ແລະ ປະກອບວິຊາຊີບ ຂອງຕົນເປັນໄລຍະເວລາບໍ່ຕ່ຳກວ່າ ສິບ ປີ.

**ມາດຕາ 32 ອົງການທີ່ມີສິດສະເໜີນາມມະຍົດສິລະປິນ**

ອົງການທີ່ມີສິດສະເໜີນາມມະຍົດສິລະປິນດີເດັ່ນ ມີ ດັ່ງນີ້:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;
4. ສະມາຄົມສິລະປິນລາວ.

**ມາດຕາ 33 ນະໂຍບາຍຕໍ່ສິລະປິນທີ່ໄດ້ຮັບນາມມະຍົດ**

ສິລະປິນທີ່ໄດ້ຮັບນາມມະຍົດ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

1. ໄດ້ຮັບໃບຢັ້ງຢືນ ແລະ ຫຼຽນນາມມະຍົດ;
2. ໄດ້ຮັບນະໂຍບາຍ ທີ່ເປັນວັດຖຸ ແລະ ຈິດໃຈອື່ນໆ ຕາມຄວາມເໝາະສົມ.

## ພາກທີ IV
## ການເຄື່ອນໄຫວຂອງສິລະປິນ ແລະ ສິລະປະການສະແດງ

### ໝວດທີ 1
### ການເຄື່ອນໄຫວຂອງສິລະປິນ

**ມາດຕາ 34 ຂອບເຂດການເຄື່ອນໄຫວຂອງສິລະປິນ**

ສິລະປິນອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ ເຄື່ອນໄຫວເພື່ອຟື້ນຟູ, ອະນຸລັກ, ພັດທະນາ, ຊຸກຍູ້, ປຸກລະດົມ, ສ້າງສັນບັນຍາກາດເບີກບານມ່ວນຊື່ນໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 35 ການເຂົ້າຮ່ວມເຄື່ອນໄຫວກິດຈະກຳອື່ນ**

ສິລະປິນ ສາມາດເຂົ້າຮ່ວມຂະບວນການແຂ່ງຂັນ ເພື່ອສົ່ງເສີມຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນຂອງຕົນ ປະກອບສ່ວນສ້າງສີສັນບັນເທີງ ໃນງານມະໂຫລານສິລະປະວັດທະນະທຳພື້ນເມືອງບັນດາເຜົ່າ, ພາກພື້ນ ແລະ ສາກົນ; ເປັນຕົວແທນໃນການເຜີຍແຜ່ ສິລະປະວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ ເພື່ອສ້າງຄວາມສາມັກຄີມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດ ໃນພາກພື້ນ ແລະ ສາກົນ.

**ມາດຕາ 36 ຈັນຍາບັນ, ມາລະຍາດ ແລະ ການແຕ່ງກາຍຂອງສິລະປິນ**

ໃນການເຄື່ອນໄຫວສິລະປະການສະແດງ ສິລະປິນ ຕ້ອງມີຈັນຍາບັນ ແລະ ມາລະຍາດ ດັ່ງນີ້:

- ຮັກອາຊີບ, ຊື່ຕົງຕໍ່ເວລາ, ນັບຖືບົດປະພັນ ແລະ ບົດບາດຂອງຕົວລະຄອນ ທີ່ຕົນຮັບສະແດງ;
- ໃຫ້ກຽດຜູ້ຊົມ, ເພື່ອນຮ່ວມງານ, ປະຕິບັດຕາມຜູ້ກຳກັບຄວບຄຸມການສະແດງ ຢ່າງເຂັ້ມງວດ;

- ສຸມທຸກຄວາມຮູ້, ຄວາມສາມາດ, ອາລົມຈິດ, ທ່າທີລີລາຕ່າງໆ ເພື່ອສະແດງຕາມບົດບາດ ແລະ ຈຸດປະສົງຂອງບົດປະພັນ.

ໃນເວລາປະຕິບັດໜ້າທີ່ການສະແດງຢູ່ສະຖານທີ່ຕ່າງໆ ສິລະປິນທຸກຄົນຕ້ອງແຕ່ງກາຍ ໃຫ້ຖືກຕ້ອງເໝາະສົມກັບກາລະເທສະ, ຕາມບົດບາດຂອງຕົວລະຄອນ ທີ່ຕົນເອງກໍາລັງຮັບບົດສະແດງຢູ່. ການນຸ່ງຖື, ເອ້ຢ້ອງ ໃຫ້ຖືກຕ້ອງສອດຄ່ອງກັບມູນເຊື້ອ, ຮີດຄອງປະເພນີອັນດີງາມ ຂອງຊາດ, ຂອງເຜົ່າ ຮູ້ເລືອກເຟັ້ນເອົາການແຕ່ງກາຍ ທີ່ຈົບງາມຂອງຍຸກສະໄໝ, ສອດຄ່ອງກັບປະເພດການສະແດງນັ້ນໆ.

**ມາດຕາ 37 ການແຈ້ງຜົນງານການປະດິດແຕ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານການປະດິດແຕ່ງ, ບົດປະພັນດ້ານສິລະປະການສະແດງຂອງຕົນ ຫຼັງຈາກໄດ້ຮັບການຢັ້ງຢືນ ຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແລ້ວ ໃຫ້ແຈ້ງຜົນງານດັ່ງກ່າວ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນຫຼັກຖານ ແລະ ປົກປ້ອງຜົນງານ ທີ່ເປັນລິຂະສິດຕາມກົດໝາຍ.

## ໝວດທີ 2
## ການຄຸ້ມຄອງສິລະປິນ ແລະ ສິລະປະການສະແດງ

**ມາດຕາ 38 ການກວດກາ ຜະລິດຕະພັນສິລະປະການສະແດງ**

ຜະລິດຕະພັນສິລະປະການສະແດງ, ເນື້ອໃນ, ຮູບແບບການເຄື່ອນໄຫວຂອງລາຍການສະແດງ ທຸກປະເພດກ່ອນຈະນໍາອອກສະແດງ, ເຜີຍແຜ່, ຊື້-ຂາຍ ຫຼື ຜ່ານສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຜ່ານການກວດກາ ແລະ ອະນຸຍາດຢ່າງຖືກຕ້ອງ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມຂະແໜງການ, ພາກສ່ວນ ທີ່ຕິດພັນກັບ.

ເຈົ້າຂອງສື່ມວນຊົນ ມີຄວາມຮັບຜິດຊອບຕໍ່ຄວາມຖືກຕ້ອງຕາມກົດໝາຍ ຂອງຜະລິດຕະພັນສິລະປະການສະແດງ ທີ່ຈະນໍາໄປເຜີຍແຜ່ຜ່ານສື່ຕ່າງໆ.

**ມາດຕາ 39 ການສົ່ງອອກ-ນໍາເຂົ້າສິລະປິນ ແລະ ຜະລິດຕະພັນສິລະປະການສະແດງ**

ການສົ່ງອອກ-ນໍາເຂົ້າສິລະປະການສະແດງ ແມ່ນ ການໄປ ຫຼື ການມາ ສະແດງຂອງສິລະປິນ ນັບທັງການຊ່ວຍເຫຼືອ, ແລກປ່ຽນ, ຊື້-ຂາຍ ວັດຖຸປະກອບ ແລະ ຜະລິດຕະພັນ ລະຫວ່າງປະເທດ.

ການສົ່ງອອກ-ນໍາເຂົ້າ ສິລະປິນດ່ຽວ, ລວມໝູ່ ແລະ ຜະລິດຕະພັນສິລະປະການສະແດງ ທຸກປະເພດ ເພື່ອຈຸດປະສົງແລກປ່ຽນທາງດ້ານສິລະປະວັດທະນະທໍາ ຫຼື ດໍາເນີນທຸລະກິດ ຕ້ອງຂໍອະນຸຍາດ ນໍາຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ເວທີການສະແດງ

**ມາດຕາ 40 ເວທີການສະແດງ**

ເວທີການສະແດງ ແມ່ນ ສະຖານທີ່ຈັດການສະແດງ ທາງດ້ານສິລະປະວັດທະນະທໍາ.

ເວທີການສະແດງ ມີ ສອງປະເພດ ຄື ເວທີການສະແດງໃນຮົ່ມ ແລະ ກາງແຈ້ງ.

**ມາດຕາ 41 ເວທີການສະແດງໃນຮົ່ມ**

ເວທີການສະແດງໃນຮົ່ມ ແມ່ນ ສະຖານທີ່ຈັດການສະແດງຢູ່ໃນອາຄານ ທີ່ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີສະຖານທີ່ ແລະ ສະພາບແວດລ້ອມທີ່ດີ ເພື່ອຮອງຮັບຜູ້ຟັງ, ຜູ້ຊົມ ໃຫ້ມີຄວາມສະດວກສະບາຍ ແລະ ຮັບປະກັນຄວາມປອດໄພ;

2. ມີລະບົບເຕັກນິກ, ແສງ, ສີ, ສຽງ ແລະ ສິ່ງເອື້ອອໍານວຍຄວາມສະດວກຕ່າງໆ ໃຫ້ແກ່ການສະແດງ;

3. ຕັ້ງຫ່າງຈາກວັດວາອາຮາມ, ໂຮງໝໍ, ໂຮງຮຽນ ແລະ ບ່ອນທີ່ມີຊຸມຊົນແອອັດ ຢ່າງໜ້ອຍ ໜຶ່ງພັນແມັດ ຂຶ້ນໄປ ສໍາລັບກິດຈະການຖາວອນ; ສໍາລັບກິດຈະການຊົ່ວຄາວ ແມ່ນ ອະນຸຍາດຕາມຄວາມເໝາະສົມ;

4. ການໃຊ້ລະດັບສຽງດັງໃຫ້ອີງຕາມສະຖານທີ່ກວ້າງ ຫຼື ແຄບ, ໃກ້ ຫຼື ໄກ ສະຖານທີ່ຊຸມຊົນ ຕາມຄວາມເໝາະສົມ ແຕ່ໂດຍທົ່ວໄປບໍ່ໃຫ້ເກີນ ແປດສິບ ເດຊິເບວ;

5. ບໍລິການ ໂດຍທົ່ວໄປບໍ່ໃຫ້ເກີນເວລາ ຊາວສາມ ໂມງ ສາມສິບ ນາທີ.

**ມາດຕາ 42 ເວທີການສະແດງກາງແຈ້ງ**

ເວທີການສະແດງກາງແຈ້ງ ແມ່ນ ສະຖານທີ່ຈັດການສະແດງ ຢູ່ໃນ ຫຼື ນອກ ອາຄານ ທີ່ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ຮັບປະກັນຄວາມປອດໄພ ໃຫ້ແກ່ນັກສະແດງ, ຜູ້ຊົມ ແລະ ຜູ້ຟັງ;

2. ຕັ້ງຫ່າງຈາກວັດວາອາຮາມ, ໂຮງຮຽນ, ໂຮງໝໍ ແລະ ບ່ອນທີ່ມີຊຸມຊົນແອອັດ ຢ່າງໜ້ອຍ ໜຶ່ງພັນແມັດ ຂຶ້ນໄປ ສໍາລັບເວທີກາງແຈ້ງ ທີ່ດໍາເນີນເປັນປະຈໍາ, ຍົກເວັ້ນເວທີການສະແດງຊົ່ວຄາວ;

3. ການໃຊ້ລະດັບສຽງດັງໃຫ້ອີງຕາມສະຖານທີ່ກວ້າງ ຫຼື ແຄບ, ໃກ້ ຫຼື ໄກ, ສະຖານທີ່ຊຸມຊົນ ຕາມຄວາມເໝາະສົມ ແຕ່ໂດຍທົ່ວໄປບໍ່ໃຫ້ເກີນ ແປດສິບ ເດຊິເບວ;

4. ໄດ້ຮັບການອະນຸຍາດຈາກອົງການປົກຄອງບ້ານ ແລະ ໃຫ້ມີການແຈ້ງ ຕໍ່ຊາວບ້ານທີ່ຢູ່ໃກ້ຄຽງ;

5. ບໍລິການ ໂດຍທົ່ວໄປບໍ່ໃຫ້ເກີນເວລາ ຊາວສາມ ໂມງ ສາມສິບ ນາທີ.

## ພາກທີ V
## ການຈັດຕັ້ງສິລະປະການສະແດງ

### ໝວດທີ 1
### ສະຖາບັນສິລະປະການສະແດງ, ກອງສະແດງອາຊີບ ແລະ ສະມາຄົມສິລະປິນລາວ

**ມາດຕາ 43 ສະຖາບັນສິລະປະການສະແດງ**

ສະຖາບັນສິລະປະການສະແດງຂອງ ລັດ ແລະ ເອກະຊົນ ເປັນສະຖານທີ່ ການຮຽນ-ການສອນ ແລະ ສ້າງບຸກຄະລາກອນທາງດ້ານສິລະປະການສະແດງ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ມີຄຸນສົມບັດສົມທໍາ ປະຕິວັດ, ມີຄວາມຮູ້, ຄວາມສາມາດທາງດ້ານວິຊາການ, ເປັນຜູ້ສືບທອດພາລະກິດຟື້ນຟູ, ອະນຸລັກ, ພັດທະນາ ແລະ ເສີມຂະຫຍາຍວຽກງານສິລະປະການສະແດງຂອງຊາດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

**ມາດຕາ 44 ກອງສະແດງອາຊີບ**

ກອງສະແດງອາຊີບ ແມ່ນ ກອງສະແດງທີ່ມີໂຄງປະກອບການຈັດຕັ້ງ, ມີເງື່ອນໄຂຄົບຊຸດ ແລະ ໄດ້ຮັບອະນຸຍາດຢ່າງເປັນທາງການ ຈາກຂະແໜງການທີ່ກ່ຽວຂ້ອງ, ເປັນແບບຢ່າງ ແລະ ເປັນເຈົ້າການ ໃນການປະດິດແຕ່ງ, ການສະແດງ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ສອດຄ່ອງກັບມູນເຊື້ອສິລະປະວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ.

**ມາດຕາ 45 ສະມາຄົມສິລະປິນລາວ**

ສະມາຄົມສິລະປິນລາວ ແມ່ນ ການຈັດຕັ້ງສັງຄົມ ທີ່ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ມີພາລະບົດບາດເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງສະມາຊິກຄົນ ແລະ ຜູ້ເຄື່ອນໄຫວສິລະປະການສະແດງ.

## ໝວດທີ 2
## ການດຳເນີນທຸລະກິດສິລະປະການສະແດງ

**ມາດຕາ 46 ເງື່ອນໄຂການດຳເນີນທຸລະກິດ**

ການດຳເນີນທຸລະກິດສິລະປະການສະແດງ ມີ ເງື່ອນໄຂ ດັ່ງນີ້:

1. ມີບົດວິພາກເສດຖະກິດ-ເຕັກນິກ;
2. ມີທຶນຮອນ, ທີ່ຕັ້ງສຳນັກງານ, ພາຫະນະ, ອຸປະກອນ;
3. ມີບຸກຄະລາກອນ ທີ່ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ທາງດ້ານສິລະປະການສະແດງ.

**ມາດຕາ 47 ການຂໍອະນຸຍາດດຳເນີນທຸລະກິດສິລະປະການສະແດງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດສິລະປະການສະແດງ ຕ້ອງຂໍອະນຸຍາດທາງດ້ານວິຊາການ ນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 48 ການເຄື່ອນໄຫວທຸລະກິດສິລະປະການສະແດງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດສິລະປະການສະແດງ ຕ້ອງເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 49 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເອົາສິລະປະການສະແດງ ເປັນການຄ້າພຽງຢ່າງດຽວ, ເປັນເຄື່ອງມື ໂຄສະນາບິດເບືອນ, ແບ່ງແຍກຄວາມສາມັກຄີໃນຄອບຄົວ, ຄວາມສາມັກຄີປອງດອງພາຍໃນຊາດ ແລະ ລະຫວ່າງປະເທດ;

2. ຈັດຕັ້ງ ແລະ ເຄື່ອນໄຫວວຽກງານສິລະປະການສະແດງ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

3. ດັດແປງເນື້ອໃນ, ອັດສຳເນົາ, ຮູບແບບບົດປະພັນ, ຜະລິດຕະພັນ ສິລະປະການສະແດງ ຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການເຫັນດີ ຈາກເຈົ້າຂອງລິຂະສິດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 ຂໍ້ຫ້າມສຳລັບເຈົ້າໜ້າທີ່ສິລະປະການສະແດງ**

ຫ້າມເຈົ້າໜ້າທີ່ສິລະປະການສະແດງ ມີພຶດຕິກຳ ດັ່ງນີ້:

1. ໃຊ້ວາຈາທ່າທີ ທີ່ບໍ່ສຸພາບ, ບ່າຍບ່ຽງ ຫຼື ປະຕິເສດ ບໍ່ໃຫ້ຄວາມຮ່ວມມື ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມາພົວພັນວຽກງານ;

2. ສົມຮູ້ຮ່ວມຄິດກັບບຸກຄົນອື່ນ ປອມແປງເອກະສານທາງການ, ແກ້ໄຂບັນຫາແບບລຳອຽງ, ໃສ່ຮ້າຍປ້າຍສີ, ເລືອກປະຕິບັດຕໍ່ຜູ້ອື່ນ ແບບອັດຕະວິໄສ ກົດໜ່ວງ, ຫຼອກລວງ, ສໍ້ໂກງ, ນາບຂູ່ບຸກຄົນອື່ນ ເພື່ອສະແຫວງຫາຜົນປະໂຫຍດແກ່ຕົນເອງ, ຄອບຄົວ ແລະ ພັກພວກ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ດັດແປງເນື້ອໃນ, ຮູບແບບບົດປະພັນ, ຜະລິດຕະພັນ ສິລະປະການສະແດງ ຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການເຫັນດີ ຈາກເຈົ້າຂອງລິຂະສິດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

4. ຍັກຍອກ, ເຊື່ອງອຳເອົາ ຜະລິດຕະພັນ, ວັດຖຸປະກອນ ທີ່ລະເມີດກົດໝາຍ ມາເປັນຂອງຕົນເອງ ຫຼື ພັກພວກ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 ຂໍ້ຫ້າມສຳລັບສິລະປິນ**

ຫ້າມສິລະປິນ ມີ ພຶດຕິກຳ ດັ່ງນີ້ :

1. ປະດິດແຕ່ງ ຫຼື ນຳເອົາສິລະປະການສະແດງ ທີ່ເປັນພິດໄພ, ເຊື່ອມຊາມ, ຊອດກະຈາ, ລາມົກອະນາຈານ, ລົບລູ່ ແຕະຕ້ອງເຖິງກຽດສັກສີ ຂອງບຸກຄົນອື່ນ, ກະຕຸ້ນຄວາມຮຸນແຮງ, ອາຊະຍາກຳ, ສິ່ງເສບຕິດ, ການເຊື່ອຖືງົມງາຍ ແລະ ອະບາຍຍະມຸກຕ່າງໆ;

2. ສະແດງທ່າທີກິລິຍາ, ເອ້ຍ້ອງແຕ່ງກາຍ ຫຼື ໃຊ້ວາຈາ ທີ່ບໍ່ສອດຄ່ອງ ກັບເນື້ອໃນ ຂອງບົດປະພັນ ແລະ ການສະແດງ;

3. ສະແດງເກີນກຳນົດເວລາ, ໃຊ້ສຽງດັງ ທີ່ເປັນການລົບກວນຄວາມສະຫງົບ ຂອງບ້ານເມືອງ ຕາມສະຖານທີ່ຕ່າງໆ;

4. ດັດແປງເນື້ອໃນ, ຮູບແບບບົດປະພັນ, ຜະລິດຕະພັນ ສິລະປະການສະແດງ ຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການເຫັນດີ ຈາກເຈົ້າຂອງລິຂະສິດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 52 ຂໍ້ຫ້າມສຳລັບສະຖາບັນສິລະປະການສະແດງ, ກອງສະແດງອາຊີບ ແລະ ສະມາຄົມສິລະປິນ**

ຫ້າມສະຖາບັນສິລະປະການສະແດງ, ກອງສະແດງອາຊີບ ແລະ ສະມາຄົມສິລະປິນ ມີ ພຶດຕິກຳ ດັ່ງນີ້:

1. ສ້າງຕັ້ງສະຖາບັນ, ກອງສະແດງ, ສະມາຄົມສິລະປິນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

2. ເປີດການຮຽນ-ການສອນ ສິລະປະການສະແດງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

3. ເຄື່ອນໄຫວສະແດງ ຢູ່ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ສອດຄ່ອງກັບລະບຽບການຂອງກອງສະແດງອາຊີບ, ສະມາຄົມສິລະປິນລາວ ແລະ ບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດສິລະປະການສະແດງ**

ຫ້າມຜູ້ດຳເນີນທຸລະກິດສິລະປະການສະແດງ ມີພຶດຕິກຳ ດັ່ງນີ້:

1. ລັກໂລບ, ສໍ້ໂກງເອົາລິຂະສິດ, ຜົນງານຂອງຜູ້ອື່ນ ມາເປັນຂອງຕົນເອງ ຫຼື ໂຄສະນາເຜີຍແຜ່ ໂດຍບໍ່ໄດ້ຮັບການເຫັນດີຈາກເຈົ້າຂອງລິຂະສິດ ແລະ ການອະນຸຍາດ ຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ;

2. ນຳເອົາຜະລິດຕະພັນສິລະປະການສະແດງ ທັງພາຍໃນ ແລະ ຕ່າງປະເທດ ທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດໄປດຳເນີນທຸລະກິດ, ເຄື່ອນໄຫວສະແດງ ຫຼື ເຜີຍແຜ່ ຜ່ານສື່ມວນຊົນສູ່ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;

3. ນຳໃຊ້ ສຽງ, ພາບ, ເພງຮ້ອງ, ຂັບ, ລຳ ແລະ ອື່ນໆ ຈາກຕ່າງປະເທດ ເພື່ອໂຄສະນາຂາຍສິນຄ້າ ຕາມຮ້ານບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ ແລະ ສະຖານທີ່ສາທາລະນະ ໂດຍບໍ່ສອດຄ່ອງກັບກົດໝາຍ;

4. ຊື້ຈ້າງ, ໃຫ້ສິນບົນ ເຈົ້າໜ້າທີ່ສິລະປະການສະແດງ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 54 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນໄດ້ດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

**ມາດຕາ 55 ການປະນີປະນອມ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວວຽກງານສິລະປະການສະແດງ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື, ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.